ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງແຮງງານ ແລະ ສະຫວັດດີການສັງຄົມ

ເລກທີ 2760 /ຮສສ

ນະຄອນຫຼວງວຽງຈັນ,ວັນທີ 14 JUL 2016

# ຂໍ້ຕົກລົງ

## ຂອງລັດຖະມົນຕີວ່າດ້ວຍການ

## ຈັດຕັ້ງ ແລະ ການເຄື່ອນໄຫວ ຂອງສູນອົງຄະທຽມ ແລະ ຟື້ນຟູສະມັດຕະພາບ 686

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 138/ນຍ, ລົງວັນທີ 4 ພຶດສະພາ 2007 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ;
- ອີງຕາມ ການສະເໜີ ຂອງກົມຈັດຕັ້ງ ແລະ ພະນັກງານ.

### ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1. ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດທີ່ຕັ້ງ, ພາລະບົດບາດ, ໜ້າທີ່ ຂອບເຂດສິດ, ໂຄງປະກອບການຈັດຕັ້ງ ຫຼັກການ ແລະ ແບບແຜນວິທີເຮັດວຽກຂອງສູນອົງຄະທຽມ ແລະ ຟື້ນຟູສະມັດຕະພາບ 686 ເພື່ອເປັນບ່ອນອີງໃຫ້ແກ່ການຈັດຕັ້ງ ແລະ ການເຄື່ອນໄຫວຂອງສູນດັ່ງກ່າວ.

**ມາດຕາ 2. ທີ່ຕັ້ງ ແລະ ພາລະບົດບາດ**

ສູນອົງຄະທຽມ ແລະ ຟື້ນຟູສະມັດຕະພາບ ຂຽນເປັນຕົວອັກສອນຫຍໍ້ວ່າ "ສຟສ" ເປັນຫົວໜ່ວຍວິຊາການລະດັບ 2, ສັງກັດຢູ່ໃນໂຄງປະກອບການຈັດຕັ້ງ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ມີພາລະບົດບາດເປັນເສນາທິການໃຫ້ແກ່ກະຊວງ ໃນການຜະລິດອົງຄະທຽມ, ປິ່ນປົວ ຟື້ນຟູສະມັດຕະພາບ ໃຫ້ແກ່ຜູ້ເສຍອົງຄະ ແລະ ຜູ້ພິການ ຢູ່ພາຍໃຕ້ການຊີ້ນຳທາງດ້ານວິຊາການ ຂອງກົມນະໂຍບາຍຕໍ່ຜູ້ມີຜົນງານ.

## ໝວດທີ 2
## ໜ້າທີ່ ແລະ ຂອບເຂດສິດ

**ມາດຕາ 3. ໜ້າທີ່**

3.1 ຜັນຂະຫຍາຍແນວທາງນະໂຍບາຍຂອງພັກ ແລະ ລັດຖະບານ, ກົດໝາຍ, ດຳລັດ, ລະບຽບການຕ່າງໆ ຂອງກະຊວງແຮງງານ ແລະ ສະຫວັດດີການສັງຄົມ ແລະ ກົມກອງວາງອອກ;